**5. ບັນດາສິ່ງທີ່ຄວນເອົາໃຈໃສ່ໃນເມື່ອຂໍຢັ້ງຢືນໃບຢັ້ງຢືນທີ່ມາສິນຄ້າຂອງລາວ**

ແບບຟອມເອກະສານ ຫຼື ບັນດາສິ່ງທີ່ຄວນເອົາໃຈໃສ່ສາມາດເຂົ້າໜ້າເວັບຊາຍຂອງຫ້ອງການເສດຖະກິດ ແລະ ວັດທະນະທໍາໄຕ້ຫວັນປະຈໍາຫວຽດນາມ ເພື່ອດາວໂຫຼດ:

www.roc-taiwan.org.vn/Lãnh sự/Xác nhận giấy tờ

1. ໃບຢັ້ງຢືນທີ່ມາສິນຄ້າຂອງລາວໂດຍສະມາຄົມອຸດສາຫະກໍາການຄ້າລາວອອກໃຫ້ຕ້ອງໄດ້ມີການຢັ້ງຢືນຂອງກະຊວງການຕ່າງປະເທດລາວຢູ່ທັງຕົ້ນສະບັບ ແລະ ສະບັບແປ, ຫຼັງຈາກນັ້ນແມ່ນຂໍຢັ້ງຢືນຢູ່ສະຖານທູດລາວປະຈໍາຫວຽດນາມ.
2. ໜັງສືຜ່ານແດນ (ຫຼື ໜັງສືຢືນຢັນຖານະຕົນເອງ) ຕົ້ນສະບັບ 1 ສະບັບ ແລະ ສະບັບອັດສໍາເນົາ 1 ສະບັບຂອງຜູ້ຮັບຜິດຊອບບໍລິສັດຂອງລາວ. ຖ້າຢາກມອບສິດໃຫ້ຜູ້ອື່ນຂໍຢັ້ງຢືນໃຫ້, ຕ້ອງສະໜອງໃບມອບສິດທີ່ມີລາຍເຊັນຂອງຜູ້ຮັບຜິດຊອບບໍລິສັດ ແລະ ປະທັບກາຂອງບໍລິສັດ, ໜັງສືຢືນຢັນຖານະຂອງຜູ້ໄດ້ມອບສິດຕົ້ນສະບັບ 1 ສະບັບ ແລະ ສະບັບອັດສໍາເນົາ 1 ສະບັບ ພ້ອມກັບໜັງສືຢືນຢັນຖານະຂອງຜູ້ຮັບຜິດຊອບບໍລິສັດສະບັບອັດສໍາເນົາ 1 ສະບັບ.
3. ຕື່ມຂໍ້ມູນເຂົ້າໃນແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ລົງລາຍເຊັນຢູ່ໃນໃບຄໍາຮ້ອງຂໍຢັ້ງຢືນໜັງສື (ປະກອບມີເບີໂທລະສັບຢູ່ລາວ ເພື່ອສະດວກໃຫ້ແກ່ການແຈ້ງປະກອບເອກະສານຕື່ມ).
4. ນອກຈາກໜັງສືຕົ້ນຕໍຕ່າງໆແລ້ວ, ເມື່ອມີຄວາມຕ້ອງຫ້ອງການເສດຖະກິດ ແລະ ວັດທະນະທໍາໄຕ້ຫວັນປະຈໍາຫວຽດນາມ ອາດຈະຮຽກຮ້ອງຜູ້ກ່ຽວສະໜອງບັນດາເອກະສານອື່ນຕື່ມອີກ ເພື່ອພິຈາລະນາຮັບຮອງເອົາສໍານວນເອກະສານ. ຫ້ອງການພວກຂ້າພະເຈົ້າບໍ່ມີການບໍລິການແປເອກະສານຈາກພາສາລາວມາເປັນພາສາຈີນ ແລະ ບໍ່ມີການບໍລິການສົ່ງໜັງສືຜ່ານທາງໄປສະນີ.

5. ຄ່າທຳນຽມ: ໜັງສືເຮັດທຳມະດາມີຄ່າທຳນຽມແມ່ນ 15 ໂດລາສະຫະລັດ/ສະບັບໜຶ່ງ ແລະ ເວລາຮັບສຳນວນເອກະສານແກ້ໄຂແມ່ນ 04 ວັນລັດຖະການ (ຕົວຢ່າງ: ຮັບເອົາສຳນວນເອກະສານໃນວັນຈັນ, ຕອນແລງວັນສຸກຈະສົ່ງສຳນວນເອກະສານຄືນ); ໜັງສືເຮັດດ່ວນມີຄ່າທຳນຽມແມ່ນ 22.5 ໂດລາສະຫະລັດ/ສະບັບໜຶ່ງ ແລະ ເວລາຮັບສຳນວນເອກະສານແກ້ໄຂແມ່ນ 02 ວັນລັດຖະການ. ຖ້າຕ້ອງການຢັ້ງຢືນສະບັບອັດສຳເນົາຕື່ມອີກ, ແຕ່ລະສະບັບອັດສຳເນົານັ້ນຈະມີຄ່າທຳນຽມເທົ່າກັບ 50% ຂອງຕົ້ນສະບັບ (ໃນກໍລະນີເງິນບໍ່ຮອດ 1 ໂດລາສະຫະລັດ, ໃຫ້ຈ່າຍເປັນເງິນຫວຽດນາມທີ່ມີຄຸນຄ່າທຽບເທົ່າ). ຖ້າຜູ້ຢັ້ງຢືນໜັງສືຂໍລົບລ້າງການຢັ້ງຢືນ ຫຼື ການຢັ້ງຢືນບໍ່ສາມາດປະຕິບັດໄດ້ຍ້ອນມີຄວາມຜິດພາດຂອງຜູ້ຂໍຢັ້ງຢືນເອງ, ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມຈະບໍ່ສົ່ງຄືນຄ່າທຳນຽມທີ່ໄດ້ເກັບມາແລ້ວ.

6. ເວລາເຮັດວຽກ: ແຕ່ວັນຈັນ ເຖິງ ວັນສຸກ (ຍົກເວັ້ນວັນບຸນ, ປີໃໝ່, ກຸດທີ່ໄດ້ພັກຕາມກຳນົດ)

ຮັບແກ້ໄຂເອກະສານ: ແຕ່ 8:30 ເຖິງ 12:00

ສົ່ງຜົນແກ້ເອກະສານ: ແຕ່ 14:00 ເຖິງ 16:00 (ໃນກໍລະນີເກີດມີບັນຫາຕິດຄັດເຄື່ອງຈັກຄອມພິວເຕີ ຫຼື ເຄືອຂ່າຍອິນເຕີເນັດອາດຈະເລີກການຊ້າກວ່າ)

7. ທີ່ຢູ່: ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມ

ຊັ້ນ 5, ຕຶກ HITC, ເລກທີ 239 ຖະໜົນຊວັນຖຸຍ, ເມືອງເກົ່າເຢີຍ, ນະຄອນຫຼວງຮ່າໂນ້ຍ

ເບີໂທ: 84-24-38335502~04 (ຕໍ່) 130

ແຟັກ: 84-24-38336621

ວັນທີ update: 14/12/2017